ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 471/ລບ

ນະຄອນຫຼວງວຽງຈັນ, ວັນທີ 02.07.2021

# ດຳລັດ
# ວ່າດ້ວຍທຸລະກິດເຊົ່າສິນເຊື່ອ
# (ສະບັບປັບປຸງ)

- ອີງຕາມກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 61/ທຫລ, ລົງວັນທີ 22 ເມສາ 2021.

**ລັດຖະບານອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸລະກິດເຊົ່າສິນເຊື່ອ ເພື່ອໃຫ້ທຸລະກິດດັ່ງກ່າວ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແນໃສ່ສ້າງເງື່ອນໄຂ ໃນການເຂົ້າເຖິງແຫຼ່ງທຶນ ແລະ ອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທຸລະກິດເຊົ່າສິນເຊື່ອ**

ທຸລະກິດເຊົ່າສິນເຊື່ອ ແມ່ນການສະໜອງສິນເຊື່ອເປັນວັດຖຸ, ພາຫະນະກົນຈັກ ແລະ ອື່ນໆ ຊຶ່ງຜູ້ໃຫ້ເຊົ່າສິນເຊື່ອ ເປັນຜູ້ສະໜອງ ໂດຍກົງ ຫຼື ເປັນຜູ້ຈັດຫາຊັບສິນເຊົ່າ ໃຫ້ແກ່ຜູ້ເຊົ່າສິນເຊື່ອ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຫ້ເຊົ່າສິນເຊື່ອ** ໝາຍເຖິງ ບໍລິສັດເຊົ່າສິນເຊື່ອ;

2. **ຜູ້ເຊົ່າສິນເຊື່ອ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການບໍລິການສິນເຊື່ອຈາກຜູ້ໃຫ້ເຊົ່າສິນເຊື່ອ;
3. **ຜູ້ສະໜອງຊັບສິນເຊົ່າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຂາຍຊັບສິນເຊົ່າ ໃຫ້ແກ່ຜູ້ໃຫ້ເຊົ່າສິນເຊື່ອ ເພື່ອເອົາຊັບດັ່ງກ່າວໃຫ້ຜູ້ເຊົ່າສິນເຊື່ອ ເຊົ່າ;
4. **ຊັບສິນເຊົ່າ** ໝາຍເຖິງ ສັງຫາລິມະຊັບ ຊຶ່ງເປັນເປົ້າໝາຍຂອງການເຊົ່າສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
5. **ຜູ້ບໍລິຫານ** ໝາຍເຖິງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ຂອງບໍລິສັດເຊົ່າສິນເຊື່ອ;
6. **ຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືຮຸ້ນໃນບໍລິສັດເຊົ່າສິນເຊື່ອ ແຕ່ ສິບສ່ວນຮ້ອຍຂຶ້ນໄປ.

**ມາດຕາ 4 ຫຼັກການກ່ຽວກັບການດຳເນີນທຸລະກິດເຊົ່າສິນເຊື່ອ**

ການດຳເນີນທຸລະກິດເຊົ່າສິນເຊື່ອ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການແຂ່ງຂັນທຸລະກິດທີ່ເປັນທຳ;
4. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບບໍລິສັດເຊົ່າສິນເຊື່ອ ຢູ່ ສປປ ລາວ.

## ໝວດທີ 2
## ທຸລະກິດເຊົ່າສິນເຊື່ອ

**ມາດຕາ 6 ການເຄື່ອນໄຫວທຸລະກິດຂອງບໍລິສັດເຊົ່າສິນເຊື່ອ**

ບໍລິສັດເຊົ່າສິນເຊື່ອ ສາມາດເຄື່ອນໄຫວທຸລະກິດຂອງຕົນໃນ ສາມ ປະເພດ ດັ່ງນີ້:

1. ການເຊົ່າສິນເຊື່ອທາງດ້ານການເງິນ;
2. ການເຊົ່າເພື່ອດຳເນີນງານ;
3. ການເຊົ່າຊື້.

**ມາດຕາ 7 ການເຊົ່າສິນເຊື່ອທາງດ້ານການເງິນ**

ການເຊົ່າສິນເຊື່ອທາງດ້ານການເງິນ ແມ່ນການເຊົ່າຊັບສິນ ໄລຍະກາງ ແລະ ໄລຍະຍາວ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການຜະລິດ ຫຼື ດຳເນີນທຸລະກິດ ຂອງຜູ້ເຊົ່າສິນເຊື່ອ ຊຶ່ງຜູ້ເຊົ່າສິນເຊື່ອຕ້ອງຮັບຜິດຊອບຄ່າບຳລຸງຮັກສາຊັບສິນເຊົ່າຕະຫຼອດໄລຍະເວລາຂອງການເຊົ່າ ແລະ ມີສິດຄອບຄອງ ແລະ ນຳໃຊ້ ຊັບສິນເຊົ່າເທົ່ານັ້ນ. ເມື່ອສິ້ນສຸດສັນຍາ ຜູ້ເຊົ່າສິນເຊື່ອ ຕ້ອງສົ່ງຊັບສິນເຊົ່າຄືນ ຫຼື ມີທາງເລືອກຈະຊື້ ຫຼື ເຊົ່າຕໍ່ ຕາມການຕົກລົງຂອງຄູ່ສັນຍາ.

ມາດຕາ 8 ການເຊົ່າເພື່ອດຳເນີນງານ

ການເຊົ່າເພື່ອດຳເນີນງານ ແມ່ນການໃຫ້ເຊົ່າຊັບສິນຂອງຜູ້ໃຫ້ເຊົ່າສິນເຊື່ອ ແກ່ຜູ້ເຊົ່າສິນເຊື່ອ ເພື່ອນຳໃຊ້ຊັບສິນດັ່ງກ່າວ ຕາມໄລຍະເວລາທີ່ຕົກລົງກັນ ໂດຍກຳມະສິດໃນຊັບສິນເຊົ່າ ແມ່ນເປັນຂອງຜູ້ໃຫ້ເຊົ່າສິນເຊື່ອ ຕະຫຼອດໄລຍະເວລາຂອງສັນຍາ ຊຶ່ງຜູ້ໃຫ້ເຊົ່າສິນເຊື່ອຕ້ອງຮັບຜິດຊອບຄ່າບຳລຸງຮັກສາຊັບສິນເຊົ່າ ຕະຫຼອດໄລຍະເວລາຂອງການເຊົ່າ. ເມື່ອສິ້ນສຸດສັນຍາ ຜູ້ເຊົ່າສິນເຊື່ອ ຕ້ອງສົ່ງຊັບສິນເຊົ່າຄືນ ຫຼື ສາມາດເຊົ່າຕໍ່ໄດ້ ຕາມການຕົກລົງຂອງຄູ່ສັນຍາ.

ມາດຕາ 9 ການເຊົ່າຊື້

ການເຊົ່າຊື້ ແມ່ນການໃຫ້ເຊົ່າຊັບສິນຂອງຜູ້ໃຫ້ເຊົ່າສິນເຊື່ອ ແກ່ຜູ້ເຊົ່າສິນເຊື່ອ ຊຶ່ງຜູ້ເຊົ່າສິນເຊື່ອ ຈະໄດ້ກຳມະສິດໃນຊັບສິນເຊົ່າ ກໍຕໍ່ເມື່ອຕົນໄດ້ຈ່າຍຄ່າເຊົ່າຢ່າງຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

ມາດຕາ 10 ສັນຍາເຊົ່າສິນເຊື່ອ

ສັນຍາເຊົ່າສິນເຊື່ອ ແມ່ນການຕົກລົງລະຫວ່າງຜູ້ໃຫ້ເຊົ່າສິນເຊື່ອ ກັບ ຜູ້ເຊົ່າສິນເຊື່ອ ຊຶ່ງພາໃຫ້ເກີດສິດ ແລະ ພັນທະກ່ຽວກັບຊັບສິນເຊົ່າ ຊຶ່ງຕ້ອງເຮັດເປັນລາຍລັກອັກສອນ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ລາຍລະອຽດຂອງຊັບສິນເຊົ່າ ເຊັ່ນ ຊະນິດ, ລຸ້ນ, ໝາຍເລກ ແລະ ອື່ນໆ ທີ່ຈຳເປັນ;
2. ມູນຄ່າຂອງຊັບສິນເຊົ່າ, ຄ່າເຊົ່າ, ວິທີຄິດໄລ່ຄ່າເຊົ່າ ແລະ ການຊຳລະ;
3. ກຳນົດໄລຍະເວລາເຊົ່າ;
4. ເງື່ອນໄຂຂອງສັນຍາໃນກໍລະນີມີ ການສູນເສຍ ຫຼື ເປ່ເພ;
5. ການປະກັນໄພ (ຖ້າມີ);
6. ມາດຕະການຕໍ່ການລະເມີດສັນຍາ ແລະ ຄ່າປັບໃໝ (ຖ້າມີ);
7. ການແກ້ໄຂຂໍ້ຂັດແຍ່ງ;
8. ເງື່ອນໄຂ ການສິ້ນສຸດ ແລະ ການຍົກເລີກສັນຍາ;
9. ເນື້ອໃນອື່ນທີ່ຈຳເປັນ ຕາມການຕົກລົງຂອງຄູ່ສັນຍາ.

ສຳລັບສັນຍາເຊົ່າສິນເຊື່ອທາງດ້ານການເງິນ ນອກຈາກເນື້ອໃນທີ່ໄດ້ກຳນົດໄວ້ຂ້າງເທິງແລ້ວ ຍັງຕ້ອງກຳນົດເນື້ອໃນ ກ່ຽວກັບ ອັດຕາດອກເບ້ຍ, ທາງເລືອກໃນການຊື້ ຫຼື ເຊົ່າຕໍ່ ຊັບສິນເຊົ່າ.

ສຳລັບສັນຍາເຊົ່າຊື້ ນອກຈາກເນື້ອໃນທີ່ໄດ້ກຳນົດໄວ້ຂ້າງເທິງແລ້ວ ຍັງຕ້ອງກຳນົດເນື້ອໃນກ່ຽວກັບອັດຕາດອກເບ້ຍ.

ຜູ້ໃຫ້ເຊົ່າສິນເຊື່ອ ຕ້ອງກຳນົດຮ່າງສັນຍາໃຫ້ສອດຄ່ອງກັບການເຊົ່າສິນເຊື່ອແຕ່ລະປະເພດ ແລະ ສຳເນົາຮ່າງສັນຍາດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ.

ສຳລັບສັນຍາທີ່ມີມູນຄ່າ ໜຶ່ງຮ້ອຍລ້ານກີບ ຂຶ້ນໄປ ຕ້ອງມີການຈົດທະບຽນສານ.

ມາດຕາ 11 ສິດ ແລະ ພັນທະ ຂອງຜູ້ໃຫ້ເຊົ່າສິນເຊື່ອ

ຜູ້ໃຫ້ເຊົ່າສິນເຊື່ອ ມີສິດ ແລະ ພັນທະ ດັ່ງນີ້:

1. ແນະນຳຊັບສິນເຊົ່າ ຫຼື ຜູ້ສະໜອງ ໃຫ້ແກ່ຜູ້ເຊົ່າສິນເຊື່ອ;
2. ຈັດຫາຊັບສິນຈາກຜູ້ສະໜອງ ຫຼື ນຳເອົາຊັບສິນຂອງຕົນ ມາເປັນຊັບສິນເຊົ່າ;
3. ກຳນົດຄ່າເຊົ່າ ຕາມທີ່ໄດ້ຕົກລົງກັນໃນສັນຍາ;
4. ມອບຊັບສິນເຊົ່າ ໃຫ້ຜູ້ເຊົ່າສິນເຊື່ອ ຄອບຄອງ ແລະ ນຳໃຊ້ ຕາມທີ່ໄດ້ຕົກລົງກັນໃນສັນຍາ;
5. ສ້ອມແປງ ແລະ ບຳລຸງຮັກສາຊັບສິນເຊົ່າ ສຳລັບການເຊົ່າເພື່ອດຳເນີນງານ;

6. ຕິດຕາມກວດກາ ການນຳໃຊ້ຊັບສິນເຊົ່າ;
7. ທວງໃຫ້ຜູ້ເຊົ່າສິນເຊື່ອ ສ້ອມແປງ ຫຼື ບຳລຸງຮັກສາ ຊັບສິນເຊົ່າ ສຳລັບການເຊົ່າສິນເຊື່ອທາງດ້ານການເງິນ ແລະ ການເຊົ່າຊື້;
8. ຮັບເອົາຊັບສິນເຊົ່າຄືນ, ໃຫ້ເຊົ່າຕໍ່ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ຕາມການຕົກລົງ ເມື່ອສິ້ນສຸດສັນຍາ ຍົກເວັ້ນການເຊົ່າຊື້;
9. ທວງເອົາຄ່າເສຍຫາຍທີ່ເກີດຂຶ້ນ ຫຼື ຮຽກຄືນຊັບສິນເຊົ່າ ຈາກການລະເມີດສັນຍາຂອງຜູ້ເຊົ່າສິນເຊື່ອ;
10. ມອບ ຫຼື ໂອນກຳມະສິດ ໃຫ້ແກ່ຜູ້ເຊົ່າສິນເຊື່ອ ເມື່ອຜູ້ເຊົ່າສິນເຊື່ອໄດ້ຊື້ຊັບສິນເຊົ່າ ໃນເວລາສິ້ນສຸດສັນຍາ ຍົກເວັ້ນການເຊົ່າເພື່ອດຳເນີນງານ;
11. ປະຕິບັດລະບຽບການ ກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
12. ເສຍພາສີ, ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
13. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 12 ສິດ ແລະ ພັນທະ ຂອງຜູ້ເຊົ່າສິນເຊື່ອ**

ຜູ້ເຊົ່າສິນເຊື່ອ ມີສິດ ແລະ ພັນທະ ດັ່ງນີ້:

1. ເລືອກບໍລິສັດເຊົ່າສິນເຊື່ອ ແລະ ຊັບສິນເຊົ່າ ຕາມຈຸດປະສົງຂອງການເຊົ່າ;
2. ບໍ່ຮັບເອົາຊັບສິນເຊົ່າ ໃນກໍລະນີທີ່ການສົ່ງມອບ ບໍ່ຖືກຕ້ອງຕາມກຳນົດເວລາ ຫຼື ບໍ່ຖືກຕ້ອງຕາມຄຸນລັກສະນະຂອງຊັບສິນເຊົ່າ ທີ່ໄດ້ກຳນົດໄວ້ໃນສັນຍາ;
3. ຈ່າຍຄ່າເຊົ່າ, ຄ່າບໍລິການ ແລະ ທົດແທນຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
4. ນຳໃຊ້ຊັບສິນເຊົ່າ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ຄຸນລັກສະນະຂອງຊັບດັ່ງກ່າວ;
5. ສົ່ງຊັບສິນເຊົ່າຄືນໃຫ້ແກ່ ຜູ້ໃຫ້ເຊົ່າສິນເຊື່ອ ຖ້າຫາກມີການລະເມີດຕາມທີ່ກຳນົດໄວ້ໃນສັນຍາ;
6. ຊື້ຊັບສິນເຊົ່າກ່ອນສິ້ນສຸດສັນຍາ ຕາມການເຫັນດີຂອງ ຜູ້ໃຫ້ເຊົ່າສິນເຊື່ອ;
7. ຊື້, ເຊົ່າຕໍ່ ຫຼື ສົ່ງຊັບສິນເຊົ່າຄືນ ເມື່ອສິ້ນສຸດສັນຍາ;
8. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 13 ການປະຕິບັດສັນຍາ**

ຜູ້ໃຫ້ເຊົ່າສິນເຊື່ອ ແລະ ຜູ້ເຊົ່າສິນເຊື່ອ ຕ້ອງປະຕິບັດສິດ ແລະ ພັນທະຂອງຕົນ ໃຫ້ສຳເລັດຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ໃນໄລຍະເວລາປະຕິບັດສັນຍາ ຖ້າຜູ້ເຊົ່າສິນເຊື່ອ ຫາກບໍ່ສາມາດຊຳລະຄ່າເຊົ່າ ຍ້ອນຄວາມຈຳເປັນ ເປັນຕົ້ນ ໄປວຽກທາງໄກ, ເຈັບເປັນ ຫຼື ເກີດເຫດສຸດວິໄສ ຕ້ອງແຈ້ງຜູ້ໃຫ້ເຊົ່າສິນເຊື່ອຊາບເປັນລາຍລັກອັກສອນ. ຜູ້ເຊົ່າສິນເຊື່ອ ຕ້ອງໄປຊຳລະຄ່າເຊົ່າຄືນພາຍໃນ ສິບຫ້າ ວັນ ພາຍຫຼັງຄວາມຈຳເປັນນັ້ນໄດ້ສິ້ນສຸດ.

ໃນໄລຍະເວລາຂອງສັນຍາ ຜູ້ເຊົ່າສິນເຊື່ອ ສາມາດສະເໜີຊື້ຊັບສິນເຊົ່າກ່ອນສິ້ນສຸດສັນຍາກໍໄດ້ ຕາມການຕົກລົງກັນໄວ້ໃນສັນຍາ ຫຼື ຄູ່ສັນຍາຕົກລົງກັນ ຊຶ່ງການຄິດໄລ່ລາຄາຊັບສິນເຊົ່າ ຕ້ອງບົນພື້ນຖານມູນຄ່າທີ່ຍັງເຫຼືອຕົວຈິງ.

ໃນກໍລະນີຜູ້ເຊົ່າສິນເຊື່ອຫາກບໍ່ຊຳລະຄ່າງວດ ສາມງວດຕິດຕໍ່ກັນ ຜູ້ໃຫ້ເຊົ່າສິນເຊື່ອ ຕ້ອງແຈ້ງໃຫ້ຜູ້ເຊົ່າສິນເຊື່ອຊາບ ເພື່ອໃຫ້ເຂົ້າມາຊຳລະຄ່າງວດພາຍໃນ ສາມສິບ ວັນ, ຖ້າຜູ້ເຊົ່າສິນເຊື່ອ ຫາກຍັງບໍ່ມາຊຳລະຕາມກຳນົດເວລາດັ່ງກ່າວ ຜູ້ໃຫ້ເຊົ່າສິນເຊື່ອ ສາມາດຍົກເລີກສັນຍາເຊົ່າສິນເຊື່ອ ແລ້ວເອົາຊັບສິນເຊົ່ານັ້ນຄືນ ຫຼື ປັບປຸງໂຄງສ້າງໜີ້.

## ໝວດທີ 3
## ການຂໍອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ

**ມາດຕາ 14 ການຂໍອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດເຊົ່າສິນເຊື່ອ ຕ້ອງໄດ້ຮັບການຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ປະກອບເອກະສານຂໍອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ ນຳທະນາຄານແຫ່ງ ສປປ ລາວ.

ການດຳເນີນທຸລະກິດເຊົ່າສິນເຊື່ອ ຕ້ອງສ້າງຕັ້ງໃນຮູບແບບບໍລິສັດ ຊຶ່ງເອີ້ນວ່າ ບໍລິສັດເຊົ່າສິນເຊື່ອ ຍົກເວັ້ນບໍລິສັດຈຳກັດຜູ້ດຽວ.

**ມາດຕາ 15 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ ມີດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
2. ໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ;
4. ສຳເນົາໃບທະບຽນວິສາຫະກິດ ຂອງຜູ້ຖືຮຸ້ນ ທີ່ເປັນນິຕິບຸກຄົນ;
5. ໃບຢັ້ງຢືນຖານະການເງິນ, ບັນຊີສຳຮອງເງິນຝາກທະນາຄານ ຂອງຜູ້ຖືຮຸ້ນ;
6. ສັນຍາສ້າງຕັ້ງບໍລິສັດ;
7. ມະຕິຂອງກອງປະຊຸມສ້າງຕັ້ງບໍລິສັດ;
8. ກົດລະບຽບພາຍໃນຂອງບໍລິສັດ;
9. ບັນຊີລາຍຊື່ຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ;
10. ເອກະສານຢັ້ງຢືນແຫຼ່ງທຶນຈົດທະບຽນ, ຖ້າເປັນນິຕິບຸກຄົນ ຕ້ອງມີບົດລາຍງານການກວດສອບຖານະການເງິນ ຈາກບໍລິສັດກວດສອບພາຍນອກ ສອງປີ ຍ້ອນຫຼັງ;
11. ໜັງສືຍິນຍອມ ໃຫ້ທະນາຄານແຫ່ງ ສປປ ລາວ ສາມາດກວດສອບແຫຼ່ງທຶນ ທີ່ຈະນຳມາລົງທຶນ;
12. ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ, ຊີວະປະຫວັດ, ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຂອງຜູ້ຖືຮຸ້ນລາຍໃຫຍ່ ທີ່ເປັນພົນລະເມືອງລາວ ແລະ ສຳເນົາໜັງສືຜ່ານແດນ ສຳລັບຜູ້ຖືຮຸ້ນຕ່າງປະເທດ;
13. ໃບຢັ້ງຢືນ ຄຸນວຸດທິ, ປະສົບການທາງດ້ານການເງິນ, ການທະນາຄານ ຫຼື ຂະແໜງການອື່ນ ທີ່ກ່ຽວຂ້ອງ ແລະ ຊີວະປະຫວັດ ຂອງຜູ້ບໍລິຫານ;
14. ໜັງສືແຕ່ງຕັ້ງຜູ້ຕາງໜ້າຜູ້ຖືຮຸ້ນຂອງນິຕິບຸກຄົນ, ສຳລັບຜູ້ຕາງໜ້າຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນຂອງຕ່າງປະເທດ ຕ້ອງສຳເນົາໜັງສືຜ່ານແດນ;
15. ເອກະສານຢັ້ງຢືນເຫັນດີ ຈາກອົງການຄຸ້ມຄອງທີ່ມີສິດອຳນາດຂອງຕ່າງປະເທດ ໃຫ້ບຸກຄົນ, ນິຕິບຸກຄົນ ຕ່າງປະເທດ ລົງທຶນໃນທຸລະກິດເຊົ່າສິນເຊື່ອຢູ່ ສປປ ລາວ;
16. ໃບຢັ້ງຢືນ ແລະ ແຜນວາດທີ່ຕັ້ງບໍລິສັດ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານ ບ່ອນສຳນັກງານຕັ້ງຢູ່;
17. ໃບມອບສິດ ກໍລະນີມີການມອບໝາຍຜູ້ຕາງໜ້າດຳເນີນການຂໍອະນຸຍາດດຳເນີນທຸລະກິດແທນຕົນ.

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ຕ້ອງເປັນພາສາລາວ, ສຳລັບເອກະສານທີ່ເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຈາກທະບຽນສານ.

ມາດຕາ 16 ການພິຈາລະນາອອກໃບອະນຸຍາດ

ພາຍຫຼັງໄດ້ຮັບເອກະສານຂໍອະນຸຍາດດໍາເນີນທຸລະກິດເຊົ່າສິນເຊື່ອ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາ ແລະ ແຈ້ງຕອບເຫັນດີທາງດ້ານຫຼັກການ ຫຼື ປະຕິເສດ ການຂໍອະນຸຍາດດໍາເນີນທຸລະກິດພາຍໃນເວລາ ສິບຫ້າ ວັນ.

ທະນາຄານແຫ່ງ ສປປ ລາວ ຈະແຈ້ງຕອບເຫັນດີທາງດ້ານຫຼັກການ ຖ້າເຫັນວ່າຜູ້ຂໍອະນຸຍາດດໍາເນີນທຸລະກິດເຊົ່າສິນເຊື່ອ ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີທຶນພຽງພໍ, ຈະແຈ້ງ ແລະ ຖືກຕ້ອງ ຕາມດໍາລັດສະບັບນີ້;
2. ບົດວິພາກເສດຖະກິດ ມີເນື້ອໃນຄົບຖ້ວນ, ສົມເຫດສົມຜົນ ແລະ ສາມາດຈັດຕັ້ງປະຕິບັດໄດ້;
3. ຜູ້ບໍລິຫານ ມີຄຸນວຸດທິ, ປະສົບການທາງດ້ານການເງິນ, ການທະນາຄານ ຫຼື ຂະແໜງການອື່ນ ທີ່ກ່ຽວຂ້ອງ;
4. ຜູ້ຖືຮຸ້ນ ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານກະທໍາຜິດທາງອາຍາໂດຍເຈດຕະນາ.

ພາຍຫຼັງການແຈ້ງຕອບເຫັນດີທາງດ້ານຫຼັກການແລ້ວ, ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດດໍາເນີນທຸລະກິດ ພາຍໃນເວລາ ສີ່ສິບຫ້າ ວັນ ຖ້າຫາກວ່າຜູ້ຂໍອະນຸຍາດດໍາເນີນທຸລະກິດ ໄດ້ສໍາເລັດການປະຕິບັດເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ຖອກທຶນຈົດທະບຽນ ຫຼື ເງິນລົງທຶນ ຢ່າງຄົບຖ້ວນ;
2. ປະກອບພະນັກງານຈໍານວນໜຶ່ງທີ່ເໝາະສົມ;
3. ປະກອບວັດຖຸເຕັກນິກ ແລະ ສະຖານທີ່ ເພື່ອຮັບປະກັນໃຫ້ແກ່ການດໍາເນີນທຸລະກິດ;
4. ລະບົບດໍາເນີນງານ, ລະບົບກວດສອບ ແລະ ຄວບຄຸມວຽກງານພາຍໃນຢ່າງຄົບຊຸດ.

ໃນກໍລະນີທີ່ຜູ້ຂໍອະນຸຍາດດໍາເນີນທຸລະກິດ ບໍ່ສາມາດປະຕິບັດເງື່ອນໄຂໃດໜຶ່ງເທິງນີ້ ໂດຍມີເຫດຜົນພຽງພໍ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາຕໍ່ເວລາໃຫ້ອີກ ສີ່ສິບຫ້າ ວັນ. ຖ້າກາຍກໍານົດເວລາດັ່ງກ່າວ ຜູ້ຂໍອະນຸຍາດດໍາເນີນທຸລະກິດ ຫາກຍັງບໍ່ສາມາດປະຕິບັດເງື່ອນໄຂເພີ່ມເຕີມນັ້ນໄດ້ ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງປະຕິເສດການອອກໃບອະນຸຍາດດໍາເນີນທຸລະກິດ.

ມາດຕາ 17 ທຶນຈົດທະບຽນ

ບໍລິສັດເຊົ່າສິນເຊື່ອ ທີ່ໄດ້ຮັບອະນຸຍາດຕາມດໍາລັດສະບັບນີ້ ຕ້ອງມີທຶນຈົດທະບຽນ ຫ້າຕື້ກີບ ຂຶ້ນໄປ.

ທຶນຈົດທະບຽນ ສາມາດປະກອບເປັນເງິນ ແລະ ວັດຖຸ, ສໍາລັບການປະກອບເປັນວັດຖຸແມ່ນບໍ່ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນ.

ບໍລິສັດເຊົ່າສິນເຊື່ອ ທີ່ມີຈຸດປະສົງປ່ຽນແປງທຶນຈົດທະບຽນ ຕ້ອງສະເໜີໃຫ້ທະນາຄານແຫ່ງ ສປປ ລາວ ພິຈາລະນາອະນຸມັດ.

ມາດຕາ 18 ກົດລະບຽບພາຍໃນ

ບໍລິສັດເຊົ່າສິນເຊື່ອ ຕ້ອງມີກົດລະບຽບຂອງຕົນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ທີ່ຕັ້ງສໍານັກງານ;
2. ວັດຖຸປະສົງ;
3. ທຶນຈົດທະບຽນ;
4. ປະເພດຮຸ້ນ, ຈໍານວນຮຸ້ນ ແລະ ສິດລົງຄະແນນສຽງ;
5. ຊື່, ທີ່ຢູ່ ແລະ ສັນຊາດຂອງຜູ້ສ້າງຕັ້ງ;

6. ການບໍລິຫານຈັດການ;
7. ກອງປະຊຸມ ແລະ ວິທີການລົງມະຕິ;
8. ການແບ່ງເງິນປັນຜົນ;
9. ການແກ້ໄຂຂໍ້ຂັດແຍ່ງ;
10. ວິທີຊໍາລະສະສາງ.

ກົດລະບຽບຂອງບໍລິສັດເຊົ່າສິນເຊື່ອ ຈະມີຜົນສັກສິດ ກໍຕໍ່ເມື່ອມີການຮັບຮອງຢ່າງເປັນລາຍລັກອັກສອນຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 19 ການສ້າງຕັ້ງສາຂາ**

ບໍລິສັດເຊົ່າສິນເຊື່ອ ສາມາດສ້າງຕັ້ງສາຂາຂອງຕົນ ໂດຍໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ແລະ ມີເງື່ອນໄຂ ດັ່ງນີ້:

1. ບົດວິພາກເສດຖະກິດທີ່ສົມເຫດສົມຜົນ;
2. ຜູ້ບໍລິຫານສາຂາ ແລະ ພະນັກງານ ທີ່ມີຄວາມຮູ້ ຄວາມສາມາດ ທາງດ້ານການເງິນ ຫຼື ການທະນາຄານ;
3. ມີລະບຽບດໍາເນີນງານ, ລະບຽບຄຸ້ມຄອງສາຂາ, ລະບຽບກວດສອບ ແລະ ຄວບຄຸມວຽກງານພາຍໃນຢູ່ສາຂາຢ່າງຄົບຊຸດ;
4. ສໍານັກງານທີ່ໄດ້ມາດຕະຖານ, ອຸປະກອນຄົບຖ້ວນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ 4
## ໂຄງປະກອບການຈັດຕັ້ງຂອງບໍລິສັດເຊົ່າສິນເຊື່ອ

**ມາດຕາ 20 ໂຄງປະກອບການຈັດຕັ້ງຂອງບໍລິສັດເຊົ່າສິນເຊື່ອ**

ບໍລິສັດເຊົ່າສິນເຊື່ອ ມີໂຄງປະກອບການຈັດຕັ້ງຕົ້ນຕໍ ດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນ;
2. ສະພາບໍລິຫານ;
3. ຄະນະອໍານວຍການ.

**ມາດຕາ 21 ກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດເຊົ່າສິນເຊື່ອ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດດັ່ງກ່າວ. ກອງປະຊຸມຜູ້ຖືຮຸ້ນປະກອບດ້ວຍ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ, ກອງປະຊຸມສາມັນ ຕ້ອງເປີດຂຶ້ນຢ່າງໜ້ອຍໜຶ່ງ ຄັ້ງຕໍ່ປີ. ສໍາລັບກອງປະຊຸມວິສາມັນ ສາມາດເປີດຂຶ້ນເມື່ອໃດກໍໄດ້ ຖ້າເຫັນວ່າຈໍາເປັນ ຕາມການສະເໜີຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນແຕ່ ໜຶ່ງສ່ວນສາມ ຂອງຈໍານວນຮຸ້ນທັງໝົດ ຫຼື ຕາມກົດລະບຽບຂອງບໍລິສັດເຊົ່າສິນເຊື່ອ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາກົດລະບຽບພາຍໃນຂອງບໍລິສັດເຊົ່າສິນເຊື່ອ ຕາມການສະເໜີຂອງສະພາບໍລິຫານ;
2. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ;

3. ຮັບຮອງເອົາການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຜູ້ອຳນວຍການ ຕາມການສະເໜີຂອງສະພາບໍລິຫານ;
4. ຮັບຮອງ ເບ້ຍປະຊຸມ ແລະ ນະໂຍບາຍຕ່າງໆ ໃຫ້ສະມາຊິກສະພາບໍລິຫານ ແລະ ເງິນເດືອນ ໃຫ້ຄະນະອຳນວຍການ;
5. ຮັບຮອງ ບົດສະຫຼຸບ, ແຜນດຳເນີນງານປະຈຳປີ ແລະ ບົດລາຍງານຜົນການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;
6. ຮັບຮອງ ການເພີ່ມ ຫຼື ຫຼຸດທຶນ, ການໂອນຮຸ້ນ, ການຄວບ ຫຼື ຂາຍກິດຈະການ, ການຍຸບເລີກ;
7. ຮັບຮອງ ການແບ່ງເງິນປັນຜົນ, ການສ້າງຄັງຕ່າງໆ ຕາມການສະເໜີຂອງສະພາບໍລິຫານ;
8. ຮັບຮອງເອົາການຈ້າງຜູ້ກວດສອບພາຍນອກ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສະພາບໍລິຫານ**

ສະພາບໍລິຫານ ມີສະມາຊິກຢ່າງໜ້ອຍ ສາມ ຄົນ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຜູ້ຖືຮຸ້ນ. ສະພາບໍລິຫານ ມີອາຍຸການ ສາມ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ສະພາບໍລິຫານ ເຄື່ອນໄຫວວຽກງານຂອງຕົນຕາມລະບອບປະຊຸມ ຊຶ່ງໄຂຂຶ້ນຢ່າງໜ້ອຍ ສາມ ເດືອນຕໍ່ຄັ້ງ.

**ມາດຕາ 24 ເງື່ອນໄຂຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄວາມຮູ້ ຄວາມສາມາດ ທາງດ້ານການເງິນ, ການທະນາຄານ ແລະ ມີປະສົບການທາງດ້ານບໍລິຫານຈັດການ;
2. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ ເປັນຕົ້ນ ການຍັກຍອກ, ສໍ້ໂກງຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ, ການດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍ່ເຄີຍຖືກປົດອອກຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍ ຫຼື ຕັດສິນບໍ່ໃຫ້ເປັນຜູ້ບໍລິຫານ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ນຳສະເໜີແຜນຍຸດທະສາດ, ກົດລະບຽບພາຍໃນ, ແຜນການ, ແຜນງານ ແລະ ບົດລາຍງານປະຈຳປີ ຕໍ່ກອງປະຊຸມຜູ້ຖືຮຸ້ນ;
2. ຮັບຮອງເອົາລະບຽບການຂອງບໍລິສັດເຊົ່າສິນເຊື່ອ ຕາມການສະເໜີຂອງຜູ້ອຳນວຍການ;
3. ພິຈາລະນາຮັບຮອງເອົາຜະລິດຕະພັນ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ອຳນວຍການ ແລ້ວສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ;
5. ຮັບຮອງເອົາການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ຕາມການສະເໜີຂອງຜູ້ອຳນວຍການ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຄະນະອຳນວຍການ**

ຄະນະອຳນວຍການປະກອບດ້ວຍ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ຈຳນວນໜຶ່ງ.

ຜູ້ອຳນວຍການຂອງບໍລິສັດເຊົ່າສິນເຊື່ອ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

ຜູ້ອຳນວຍການ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍສະພາບໍລິຫານ, ມີອາຍຸການ ສາມ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຮອງຜູ້ອຳນວຍການ ມີໜ້າທີ່ຊ່ວຍຜູ້ອຳນວຍການໃນການບໍລິຫານວຽກງານຂອງບໍລິສັດເຊົ່າສິນເຊື່ອ ທັງເປັນຜູ້ຮັກສາການແທນ ໃນກໍລະນີທີ່ຜູ້ອຳນວຍການຕິດຂັດ ຕາມການມອບໝາຍຂອງຜູ້ອຳນວຍການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ**

ຜູ້ອຳນວຍການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິກອງປະຊຸມສະພາບໍລິຫານ;
2. ຄົ້ນຄວ້າສ້າງແຜນຍຸດທະສາດ, ແຜນການ, ແຜນງານ, ບົດລາຍງານປະຈຳປີ ແລະ ນິຕິກຳ ເພື່ອສະເໜີສະພາບໍລິຫານ ພິຈາລະນາ;
3. ຄົ້ນຄວ້າສ້າງຜະລິດຕະພັນ ແລະ ຄ່າບໍລິການ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ແລະ ກົງຈັກຊ່ວຍວຽກ ແລ້ວສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;
5. ເປັນຕົວແທນໃນການເຊັນສັນຍາ ແລະ ເອກະສານທາງການຕ່າງໆ ຂອງບໍລິສັດເຊົ່າສິນເຊື່ອ;
6. ຄົ້ນຄວ້າກ່ຽວກັບການຍ້ອງຍໍ ຫຼື ການລົງວິໄນ ຕໍ່ພະນັກງານຂອງບໍລິສັດເຊົ່າສິນເຊື່ອ;
7. ສະໜອງຂໍ້ມູນ ແລະ ຊີ້ແຈງບັນຫາ ຕໍ່ກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ ແລະ ຜູ້ກວດສອບພາຍນອກ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຮັກສາຄວາມໝັ້ນຄົງ, ການບັນຊີ, ການລາຍງານ ແລະ ການກວດສອບ

**ມາດຕາ 28 ການຮັກສາຄວາມໝັ້ນຄົງ**

ບໍລິສັດເຊົ່າສິນເຊື່ອ ຕ້ອງປະຕິບັດຕາມເງື່ອນໄຂການຮັກສາຄວາມໝັ້ນຄົງ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

**ມາດຕາ 29 ການບັນຊີ**

ບໍລິສັດເຊົ່າສິນເຊື່ອ ຕ້ອງຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ແລະ ປະຕິບັດບັນຊີຕາມຜັງບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

ການນຳໃຊ້ໂປຣແກຣມບັນຊີ ແລະ/ຫຼື ການເພີ່ມບັນຊີໃດໜຶ່ງໃນຜັງບັນຊີ ຕ້ອງໄດ້ຮັບການເຫັນດີຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 30 ການລາຍງານ**

ບໍລິສັດເຊົ່າສິນເຊື່ອ ຕ້ອງລາຍງານສະພາບການດຳເນີນທຸລະກິດຂອງຕົນປະຈຳ ເດືອນ, ໄຕມາດ ແລະ ປີ ໃຫ້ທະນາຄານແຫ່ງ ສປປ ລາວ ເປັນຕົ້ນ ການບໍລິຫານ, ການດຳເນີນງານ ແລະ ຖານະການເງິນຂອງຕົນ ລວມທັງສາຂາ ແລະ ຕົວແທນໃຫ້ບໍລິການ ຫຼື ຕາມການສະເໜີ ຂອງທະນາຄານແຫ່ງ ສປປ ລາວ.

ມາດຕາ 31 ການກວດສອບ

ບໍລິສັດເຊົ່າສິນເຊື່ອ ຕ້ອງໄດ້ຮັບການກວດສອບຈາກວິສາຫະກິດກວດສອບພາຍນອກ ພາຍໃນເວລາ ສາມເດືອນ ພາຍຫຼັງປິດບັນຊີປະຈຳປີ ແລະ ຕ້ອງສົ່ງຜົນຂອງການກວດສອບດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ.

## ໝວດທີ 6
## ການຄອບ ຫຼື ຂາຍກິດຈະການ, ການຍຸບເລີກ ແລະ ການລົ້ມລະລາຍ

ມາດຕາ 32 ການຄອບ ຫຼື ຂາຍກິດຈະການ

ການຄອບ ຫຼື ຂາຍກິດຈະການສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງບໍລິສັດເຊົ່າສິນເຊື່ອ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ, ປະຕິບັດຕາມກົດໝາຍ ແລະ ລະບຽບການ.

ມາດຕາ 33 ການຍຸບເລີກ

ບໍລິສັດເຊົ່າສິນເຊື່ອຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນ ມີມະຕິໃຫ້ຍຸບເລີກ;
2. ໃບອະນຸຍາດດຳເນີນທຸລະກິດ ຫຼື ໃບທະບຽນວິສາຫະກິດ ຖືກຖອນ;
3. ສານຕັດສິນໃຫ້ຍຸບເລີກ ຫຼື ລົ້ມລະລາຍ.

ການຍຸບເລີກບໍລິສັດເຊົ່າສິນເຊື່ອ ໃຫ້ປະຕິບັດຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 34 ການລົ້ມລະລາຍ

ການລົ້ມລະລາຍຂອງບໍລິສັດເຊົ່າສິນເຊື່ອ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ.

## ໝວດທີ 7
## ຂໍ້ຫ້າມ

ມາດຕາ 35 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດເຊົ່າສິນເຊື່ອ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ປອມແປງໃບອະນຸຍາດ;
2. ໃຫ້ສິນບົນແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ໃບອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ;
3. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມສຳລັບບໍລິສັດເຊົ່າສິນເຊື່ອ**

ຫ້າມບໍລິສັດເຊົ່າສິນເຊື່ອ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດເຊົ່າສິນເຊື່ອ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ;
2. ເອົາໃບອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ ໃຫ້ຜູ້ອື່ນນຳໃຊ້;
3. ປອມແປງ, ປົກເປືອນຂໍ້ມູນການບັນຊີ ແລະ ບົດລາຍງານການເງິນ;
4. ໂຄສະນາການບໍລິການຂອງຕົນ ເກີນຄວາມເປັນຈິງ;
5. ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຕໍ່ຜູ້ເຊົ່າສິນເຊື່ອ ໃນການທວງຄ່າເຊົ່າ ຫຼື ຊັບສິນເຊົ່າ;
6. ສະເໜີໃຫ້ ຫຼື ໃຫ້ສິນບົນແກ່ການຈັດຕັ້ງ ຫຼື ເຈົ້າໜ້າທີ່;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມສຳລັບຜູ້ເຊົ່າສິນເຊື່ອ**

ຫ້າມຜູ້ເຊົ່າສິນເຊື່ອ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ຊັບສິນເຊົ່າ ໄປເຄື່ອນໄຫວກະທຳຜິດກົດໝາຍ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊັບສິນເຊົ່າ ຫຼື ສັງຄົມ;
2. ຂາຍ, ຄ້ຳປະກັນ, ຊວດຈຳ ຫຼື ທຳລາຍ ຊັບສິນເຊົ່າ;
3. ໃຫ້ບຸກຄົນອື່ນ ເຊົ່າຊັບສິນເຊົ່າຕໍ່ ໂດຍບໍ່ໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນຈາກບໍລິສັດເຊົ່າສິນເຊື່ອ;
4. ດັດແປງຊັບສິນເຊົ່າ ໂດຍບໍ່ໄດ້ຮັບອະນຸຍາດຈາກບໍລິສັດເຊົ່າສິນເຊື່ອ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 38 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ເປັນຄະນະອຳນວຍການ, ເປັນຜູ້ຈັດການ ຫຼື ເປັນທີ່ປຶກສາ ໃຫ້ບໍລິສັດເຊົ່າສິນເຊື່ອ;
2. ເປີດເຜີຍຂໍ້ມູນຄວາມລັບ ກ່ຽວກັບທຸລະກິດເຊົ່າສິນເຊື່ອ ໂດຍບໍ່ໄດ້ຮັບອະນຸຍາດ;
3. ທວງເອົາ, ຂໍເອົາ, ຮັບເອົາສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ໝູ່ເພື່ອນ;
4. ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງ ຂອງບໍລິສັດເຊົ່າສິນເຊື່ອ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 39 ອົງການຄຸ້ມຄອງ ແລະ ກວດກາ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ບໍລິສັດເຊົ່າສິນເຊື່ອ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງບໍລິສັດເຊົ່າສິນເຊື່ອ ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງນິຕິກໍາ ກ່ຽວກັບທຸລະກິດເຊົ່າສິນເຊື່ອ ເພື່ອນໍາສະເໜີລັດຖະບານພິຈາລະນາ ພ້ອມທັງຄົ້ນຄວ້າ ແລະ ອອກລະບຽບການ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາເຜີຍແຜ່, ຊີ້ນໍາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ຕາມດໍາລັດສະບັບນີ້ ໃນຂອບເຂດທົ່ວປະເທດ;
3. ອອກ, ໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດເຊົ່າສິນເຊື່ອ;
4. ຕິດຕາມ ກວດກາ ການດໍາເນີນທຸລະກິດຂອງບໍລິສັດເຊົ່າສິນເຊື່ອ;
5. ນໍາໃຊ້ມາດຕະການໃດໜຶ່ງ ຕໍ່ບໍລິສັດເຊົ່າສິນເຊື່ອ ທີ່ລະເມີດກົດໝາຍ ແລະ ລະບຽບການ;
6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວ ກ່ຽວກັບທຸລະກິດຂອງບໍລິສັດເຊົ່າສິນເຊື່ອ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບທະນາຄານແຫ່ງ ສປປ ລາວ ໃນການຄຸ້ມຄອງບໍລິສັດເຊົ່າສິນເຊື່ອ ຕາມຂອບເຂດຄວາມຮັບຜິດຊອບ ແລະ ພາລະບົດບາດຂອງຕົນ.

**ມາດຕາ 42 ເນື້ອໃນການກວດກາ**

ການກວດກາບໍລິສັດເຊົ່າສິນເຊື່ອ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ເອກະສານລາຍງານການເງິນ;
3. ເນື້ອໃນອື່ນ ຕາມລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 43 ຮູບການການກວດກາ**

ການກວດກາບໍລິສັດເຊົ່າສິນເຊື່ອ ມີສາມຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ບໍ່ໄດ້ແຈ້ງໃຫ້ບໍລິສັດເຊົ່າສິນເຊື່ອຊາບລ່ວງໜ້າ.

ການດໍາເນີນການກວດກາບໍລິສັດເຊົ່າສິນເຊື່ອນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 44 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງບໍລິສັດເຊົ່າສິນເຊື່ອ ຢ່າງມີຄຸນນະພາບ, ດຳເນີນທຸລະກິດເຊົ່າສິນເຊື່ອຖືກຕ້ອງຕາມກົດໝາຍ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 45 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 47 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999.

ບໍລິສັດເຊົ່າສິນເຊື່ອ ທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນດຳລັດສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງກັບດຳລັດສະບັບນີ້ ພາຍໃນເວລາ ສອງ ປີ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

ຕາງໜ້າລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ